I. 3

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1746 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 23 AUG 2012

# ຂໍ້ຕົກລົງ
## ວ່າດ້ວຍອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ.

- ອີງຕາມ ກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້ ສະບັບ ເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 522/ນຍ, ລົງວັນທີ 23 ທັນວາ 2011 ວ່າດ້ວຍການ ຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ.

ລັດຖະມົນຕີ ວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

### ໝວດທີ I
### ຫຼັກການທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກ ເພື່ອກຳນົດຫຼັກການ, ລະບຽບການ, ມາດຕະການ, ການຈັດຕັ້ງ, ການຄຸ້ມຄອງ, ການຕິດຕາມ, ການກວດກາ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ເພື່ອຮັບປະກັນຜົນປະໂຫຍດ ແລະ ສິດທິອັນຊອບທຳຂອງຜູ້ຊົມໃຊ້ ເຮັດໃຫ້ສັງຄົມມີຄວາມຍຸຕິທຳ ແລະ ຄວາມເປັນລະບຽບຮຽບຮ້ອຍ.

**ມາດຕາ 2. ອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້**

ອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ແມ່ນອົງການລັດທີ່ມີສິດອຳນາດໃນການປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ໂດຍການນຳໃຊ້ມາດຕະການເພື່ອຮັກສາຊີວິດ, ສຸຂະພາບ, ຊັບສິນ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ ທີ່ເນື່ອງມາຈາກຜົນກະທົບຂອງການນຳໃຊ້ສິນຄ້າ ແລະ ການບໍລິການເປັນຕົ້ນ ອາຫານ, ຢາ, ເຄື່ອງສຳອາງ, ການປິ່ນປົວສຸຂະພາບລວມທັງການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງຜູ້ຊົມໃຊ້ ແລະ ຜູ້ສະໜອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 3. ລະບົບການຈັດຕັ້ງຂອງອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້

ອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແຕ່ສູນກາງລົງຮອດທ້ອງຖິ່ນປະກອບມີ 3 ຂັ້ນຄື :

- ຂັ້ນສູນກາງແມ່ນ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍມີພະແນກປົກປ້ອງຜູ້ຊົມໃຊ້ ແລະ ສົ່ງເສີມການແຂ່ງຂັນ ເປັນຜູ້ຊ່ວຍວຽກ;
- ຂັ້ນແຂວງແມ່ນ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ໂດຍມີຂະແໜງການຄ້າພາຍໃນ ( ໜ່ວຍງານປົກປ້ອງຜູ້ຊົມໃຊ້ ) ເປັນຜູ້ຊ່ວຍວຽກ;
- ຂັ້ນເມືອງແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ໂດຍມີຈຸງານການຄ້າພາຍໃນ ເປັນຜູ້ຊ່ວຍວຽກ.

## ໝວດທີ II
## ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້

ມາດຕາ 4. ພາລະບົດບາດ

ອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ມີພາລະບົດບາດເປັນເສນາທິການໃຫ້ແກ່ ກະຊວງອຸດສາຫະກຳ ແລະ ການຄ້າ ໃນການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ໃນຂອບເຂດທົ່ວປະເທດ.

- ອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ຂັ້ນສູນກາງແມ່ນ ກົມການຄ້າພາຍໃນ ຊຶ່ງເປັນເສນາທິການໃຫ້ແກ່ ກະຊວງອຸດສາຫະກຳ ແລະ ການຄ້າໃນການຊີ້ນຳ, ນຳພາຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ໃນຂອບເຂດທົ່ວປະເທດ;
- ອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ຂັ້ນແຂວງແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ຊຶ່ງເປັນເສນາທິການໃຫ້ແກ່ ຄະນະປົກຄອງ ແຂວງ, ນະຄອນຫລວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ໃນການປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ໃນຂອບເຂດແຂວງຂອງຕົນ;
- ອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ຂັ້ນເມືອງແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຊຶ່ງເປັນເສນາທິການໃຫ້ແກ່ ຄະນະປົກຄອງເມືອງ, ເທດສະບານ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ໃນການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ໃນຂອບເຂດເມືອງຂອງຕົນ.

ມາດຕາ 5. ສິດ ແລະ ໜ້າທີ່ຂອງອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ຂັ້ນສູນກາງ

1. ຄົ້ນຄວ້ານະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ ແລະ ແຜນການກ່ຽວກັບວຽກງານປົກປ້ອງຜູ້ຊົມໃຊ້ ເພື່ອສະເໜີໃຫ້ຂັ້ນເທິງພິຈາລະນາ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ ແລະ ແຜນການກ່ຽວກັບວຽກງານປົກປ້ອງຜູ້ຊົມໃຊ້ ໃຫ້ແກ່ສັງຄົມ;
3. ສະເໜີອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບວຽກງານປົກປ້ອງຜູ້ຊົມໃຊ້ຕາມພາລະບົດບາດຂອງຕົນ;

4. ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງເພື່ອຊີ້ນຳ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ຕາມຄວາມຮັບຜິດຊອບຂອງຕົນ;
5. ສະເໜີໃຈະ, ປັບປຸງແປງ, ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການທີ່ບໍ່ສອດຄ່ອງກັບ ລະບຽບກົດໝາຍກ່ຽວກັບການປົກປ້ອງຜູ້ຊົມໃຊ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ;
6. ສະເໜີສ້າງຕັ້ງ ຫຼື ຍຸບເລີກ ແລະ ຕິດຕາມ, ຄຸ້ມຄອງການເຄື່ອນໄຫວ ຂອງສະມາຄົມປົກປ້ອງຜູ້ຊົມໃຊ້;
7. ກໍ່ສ້າງ ແລະ ບຳລຸງ, ຍົກລະດັບ ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ໃນຂະແໜງການຂອງຕົນ;
8. ຮັບຄຳສະເໜີ, ຄຳຮ້ອງ, ພິຈາລະນາ ແກ້ໄຂຂໍ້ຂັດແຍ່ງລະຫວ່າງຜູ້ຊົມໃຊ້ ແລະ ຜູ້ສະໜອງຕາມລະບຽບກົດໝາຍ;
9. ເປີດໂທລະສັບສາຍດ່ວນໄວ້ຕະຫຼອດ 24 ຊົ່ວໂມງ ເພື່ອຮັບຄຳສະເໜີຂອງຜູ້ຊົມໃຊ້;
10. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ ອັນເນື່ອງມາຈາກການກະທຳທີ່ມີຜົນກະທົບຕໍ່ຜູ້ຊົມໃຊ້ ໃນກໍລະນີທີ່ ອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ຂັ້ນແຂວງບໍ່ສາມາດແກ້ໄຂໄດ້;
11. ພົວພັນຮ່ວມມືກັບຕ່າງປະເທດກ່ຽວກັບ ວຽກງານປົກປ້ອງຜູ້ຊົມໃຊ້ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຫຼື ຕາມການມອບໝາຍຂອງຂັ້ນເທິງ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 6. ສິດ ແລະ ໜ້າທີ່ຂອງອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ຂັ້ນແຂວງ

1. ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ ແລະ ແຜນການກ່ຽວກັບວຽກງານປົກປ້ອງຜູ້ຊົມໃຊ້ໃຫ້ແກ່ສັງຄົມ ຕາມຄວາມຮັບຜິດຊອບຂອງຕົນ;
2. ປະຕິບັດນະໂຍບາຍ ແລະ ລະບຽບການກ່ຽວກັບການປົກປ້ອງຜູ້ຊົມໃຊ້ຢ່າງຖືກຕ້ອງ ແລະ ເຂັ້ມງວດ;
3. ຮັບຄຳສະເໜີ, ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງຜູ້ຊົມໃຊ້ ແລະ ຜູ້ສະໜອງ, ໃຫ້ຄຳປຶກສາທາງດ້ານ ລະບຽບກົດໝາຍ ກ່ຽວກັບວຽກງານປົກປ້ອງຜູ້ຊົມໃຊ້;
4. ກວດກາ, ເນື້ອໃນ ແລະ ຮູບການຂອງການໂຄສະນາ, ການຕິດສະຫຼາກ, ການຫຸ້ມຫໍ່, ການວັດແທກ ແລະ ລາຄາສິນຄ້າທີ່ຜະລິດ, ນຳເຂົ້າ ແລະ ຈຳໜ່າຍ;
5. ກວດກາໃບຢັ້ງຢືນຄຸນນະພາບ, ມາດຕະຖານ ຂອງສິນຄ້າ ແລະ ການບໍລິການ, ໃບທະບຽນວິສາຫະກິດ ແລະ ເອກະສານອື່ນໆ ທີ່ກ່ຽວກັບສິນຄ້າ ແລະ ການບໍລິການ;
6. ເກັບຕົວຢ່າງຜະລິດຕະພັນ ຫຼື ສິນຄ້າ ຫຼື ວັດຖຸ ທີ່ນຳເຂົ້າໃນການດຳເນີນທຸລະກິດການຜະລິດ, ການຄ້າ, ການບໍລິການ ແລະ ວັດຖຸອື່ນເພື່ອກວດກາ;
7. ຍຶດ ຫຼື ອາຍັດສິນຄ້າ, ພາຊະນະ ຫຼື ຫີບຫໍ່ບັນຈຸສິນຄ້າ, ສະຫຼາກ ຫຼື ເອກະສານອື່ນທີ່ບໍ່ຖືກຕ້ອງ ພ້ອມທັງເຮັດບົດບັນທຶກເພື່ອເປັນຫຼັກຖານໃນການດຳເນີນຄະດີ;
8. ກວດກາສະຖານທີ່, ຕຶກ, ອາຄານ ທີ່ມີສ່ວນພົວພັນກັບການຜະລິດ, ການປຸງແຕ່ງ ຫຼື ການປັບປຸງຜະລິດຕະພັນ ແລະ ສິນຄ້າ, ສະຖານທີ່ຈຳໜ່າຍ, ຮ້ານຄ້າ, ສາງເກັບມ້ຽນ ແລະ ສະຖານທີ່ບໍລິການ;

9. ເປີດໂທລະສັບສາຍດ່ວນໄວ້ຕະຫຼອດ 24 ຊົ່ວໂມງ ເພື່ອຮັບຄຳສະເໜີຂອງຜູ້ຊົມໃຊ້;

10. ຮັບພິຈາລະນາແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍອັນເນື່ອງມາຈາກການກະທຳທີ່ມີຜົນກະທົບຕໍ່ຜູ້ຊົມໃຊ້ ໃນກໍລະນີທີ່ ອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ຂັ້ນເມືອງບໍ່ສາມາດແກ້ໄຂໄດ້;

11. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ນະຄອນຫລວງ, ອົງການປົກຄອງເມືອງ, ເທດສະບານ ເພື່ອຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

12. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານປົກປ້ອງຜູ້ຊົມໃຊ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຫຼື ຕາມການມອບໝາຍຂອງຂັ້ນເທິງ;

13. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 7. ສິດ ແລະ ໜ້າທີ່ ຂອງອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ຂັ້ນເມືອງ**

1. ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ ແລະ ແຜນການ ກ່ຽວກັບວຽກງານປົກປ້ອງຜູ້ຊົມໃຊ້ ໃຫ້ແກ່ສັງຄົມ ຕາມຄວາມຮັບຜິດຊອບຂອງຕົນ;
2. ປະຕິບັດນະໂຍບາຍ ແລະ ລະບຽບການກ່ຽວກັບການປົກປ້ອງຜູ້ຊົມໃຊ້ຢ່າງຖືກຕ້ອງ ແລະ ເຂັ້ມງວດ;
3. ຮັບຄຳສະເໜີ, ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງຜູ້ຊົມໃຊ້ ແລະ ຜູ້ສະໜອງ, ໃຫ້ຄຳປຶກສາທາງດ້ານ ລະບຽບກົດໝາຍ ກ່ຽວກັບວຽກງານປົກປ້ອງຜູ້ຊົມໃຊ້;
4. ກວດກາ, ເນື້ອໃນ ແລະ ຮູບການ ຂອງການໂຄສະນາ, ການຕິດສະຫຼາກ, ການຫຸ້ມຫໍ່, ການວັດແທກ ແລະ ລາຄາສິນຄ້າທີ່ຜະລິດ, ນຳເຂົ້າ ແລະ ການຈຳໜ່າຍຢູ່ຕະຫຼາດເປັນຕົ້ນຕໍ;
5. ກວດກາໃບຢັ້ງຢືນຄຸນນະພາບ, ມາດຕະຖານຂອງສິນຄ້າ ແລະ ການບໍລິການ, ໃບທະບຽນວິສາຫະກິດ ແລະ ເອກະສານອື່ນໆ ກ່ຽວກັບສິນຄ້າ ແລະ ການບໍລິການ;
6. ເກັບຕົວຢ່າງຜະລິດຕະພັນ ຫຼື ສິນຄ້າ ຫຼື ວັດຖຸທີ່ນຳເຂົ້າ ໃນການດຳເນີນທຸລະກິດການຜະລິດ, ການຄ້າ, ການບໍລິການ ແລະ ວັດຖຸອື່ນເພື່ອກວດກາ;
7. ຍຶດ ຫຼື ອາຍັດສິນຄ້າ, ພາຊະນະ ຫຼື ຫີບຫໍ່ບັນຈຸສິນຄ້າ, ສະຫຼາກ ຫຼື ເອກະສານອື່ນທີ່ບໍ່ຖືກຕ້ອງ ພ້ອມທັງເຮັດບົດບັນທຶກເພື່ອເປັນຫຼັກຖານໃນການດຳເນີນຄະດີ;
8. ກວດກາສະຖານທີ່, ຕຶກ, ອາຄານ ທີ່ມີສ່ວນພົວພັນກັບການຜະລິດ, ການປຸງແຕ່ງ ຫຼື ການປັບປຸງຜະລິດຕະພັນ ແລະ ສິນຄ້າ, ສະຖານທີ່ຈຳໜ່າຍ, ຮ້ານຄ້າ, ສາງເກັບມ້ຽນ ແລະ ສະຖານທີ່ບໍລິການ;
9. ເປີດໂທລະສັບສາຍດ່ວນໄວ້ຕະຫຼອດ 24 ຊົ່ວໂມງ ເພື່ອຮັບຄຳສະເໜີຂອງຜູ້ຊົມໃຊ້;
10. ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງເພື່ອຊີ້ນຳ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ III
## ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້

**ມາດຕາ 8. ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້**

ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ແມ່ນຜູ້ດຽວກັນກັບເຈົ້າໜ້າທີ່ກວດກາການຄ້າ ຊຶ່ງໄດ້ຮັບການແຕ່ງຕັ້ງ ແລະ ມີມາດຖານເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດວ່າດ້ວຍການກວດກາການຄ້າ.

**ມາດຕາ 9. ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້**

ນອກຈາກປະຕິບັດຕາມສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ກວດການການຄ້າແລ້ວຍັງມີສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ດັ່ງນີ້:

1. ປະຕິບັດນະໂຍບາຍ ແລະ ລະບຽບການ ກ່ຽວກັບການປົກປ້ອງຜູ້ຊົມໃຊ້ຢ່າງຖືກຕ້ອງ ແລະ ເຂັ້ມງວດ;
2. ໃຫ້ຄໍາປຶກສາທາງດ້ານລະບຽບກົດໝາຍ ກ່ຽວກັບວຽກງານການປົກປ້ອງຜູ້ຊົມໃຊ້;
3. ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງຜູ້ຊົມໃຊ້ ແລະ ຜູ້ສະໜອງ ແລະ ໃຫ້ຄໍາປຶກສາທາງດ້ານລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບຂະແໜງການຂອງຕົນ;
4. ກວດກາ, ເນື້ອໃນ ແລະ ຮູບການຂອງການໂຄສະນາ, ການຕິດສະຫຼາກ, ການຫຸ້ມຫໍ່, ການວັດແທກ ແລະ ລາຄາສິນຄ້າທີ່ຜະລິດ, ນໍາເຂົ້າ ແລະ ຈໍາໜ່າຍຢູ່ຕະຫຼາດ ເປັນຕົ້ນຕໍ;
5. ກວດກາໃບຢັ້ງຢືນຄຸນນະພາບ, ມາດຕະຖານ ຂອງສິນຄ້າ ແລະ ການບໍລິການ, ໃບທະບຽນວິສາຫະກິດ ແລະ ເອກະສານອື່ນໆ ທີ່ກ່ຽວກັບ ສິນຄ້າ ແລະ ການບໍລິການ;
6. ເກັບຕົວຢ່າງຜະລິດຕະພັນ ຫຼື ສິນຄ້າ ຫຼື ວັດຖຸ ທີ່ນໍາໃຊ້ເຂົ້າໃນການດໍາເນີນທຸລະກິດ ການຜະລິດ, ການຄ້າ ການບໍລິການ ແລະ ວັດຖຸອື່ນ ເພື່ອກວດກາ;
7. ສອບຖາມບຸກຄົນ, ຜູ້ຕາງໜ້າ ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບຄຸນນະພາບ, ມາດຕະຖານສິນຄ້າ ການບໍລິການ ແລະ ສິ່ງແວດລ້ອມ;
8. ສະເໜີຕໍ່ຂັ້ນເທິງ ຫຼື ໜ່ວຍງານ ທີ່ກ່ຽວຂ້ອງເພື່ອໂຈະ ຫຼື ຖອນໃບຢັ້ງຢືນ, ໃບທະບຽນວິສາຫະກິດ ຫຼື ເອກະສານອື່ນກ່ຽວກັບສິນຄ້າ ແລະ ການບໍລິການ ເມື່ອເຫັນວ່າມີການລະເມີດ ລະບຽບກົດໝາຍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
9. ສະເໜີຕໍ່ຂັ້ນເທິງ ຫຼື ໜ່ວຍງານທີ່ກ່ຽວຂ້ອງ ເພື່ອນໍາໃຊ້ມາດຕະການສຶກສາອົບຮົມ ແລະ ມາດຕະການປັບໃໝຕໍ່ຜູ້ລະເມີດ;
10. ສະຫຼຸບ, ປະເມີນຜົນ ແລະ ລາຍງານກ່ຽວກັບ ການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

## ໝວດທີ IV
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ.

**ມາດຕາ 10. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ນິຕິບຸກຄົນ ພະນັກງານລັດຖະກອນ ແລະ ເຈົ້າໜ້າທີ່ຂອງລັດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້, ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆ ຕາມລະບຽບກົດໝາຍ.

**ມາດຕາ11. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພະນັກງານ, ລັດຖະກອນ ຫຼື ເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້ ແລະ ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ປັບໃໝ ຫຼື ລົງໂທດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 12. ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບ ກົດໝາຍ ວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້ ແລະ ຂໍ້ຕົກລົງສະບັບນີ້, ທີ່ມີລັກສະນະເບົາບາງ ແລະ ບໍ່ເປັນການກະທຳຜິດທາງອາຍາ ພາຍຫຼັງທີ່ໄດ້ຮັບ ການກ່າວເຕືອນມາແລ້ວສອງຄັ້ງ ຈະຖືກປັບໃໝຕາມລະບຽບກົດໝາຍທີ່ກ່ຽວຂ້ອງດັ່ງນີ້:

1. ການໂຄສະນາສິນຄ້າທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງເຊັ່ນ: ບໍ່ຖືກກັບປະເພດ, ຊະນິດສິນຄ້າ, ຄຸນລັກສະນະ, ຄຸນນະພາບ, ມາດຕະຖານຂອງສິນຄ້າ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບ ແລ້ວແຕ່ລະກໍລະນີ ພ້ອມທັງອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ ຫຼື ທຳລາຍຖິ້ມ; ( ກົດໝາຍ ວ່າດ້ວຍ ມາດຕະຖານ ມາດຕາ 104 ແລະ ມາດຕາ 14 ຂໍ້ກຳນົດຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ ວ່າດ້ວຍການຄຸ້ມຄອງການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດ ເລກທີ 2581/ກຊສ, ລົງວັນທີ 12 ພະຈິກ 2003);
2. ການໂຄສະນາສິນຄ້າມີລັກສະນະສຽດສີ ແລະ ໃສ່ຮ້າຍປ້າຍສີສິນຄ້າ ແລະ ການບໍລິການຂອງຜູ້ອື່ນ ຈະຖືກປັບໃໝ ແຕ່ 50.000 ກີບ ຫາ 300.000 ກີບ ໃນກໍລະນີດັ່ງກ່າວນີ້ຖ້າຫາກ ມີຝ່າຍໃດໜຶ່ງມາສະເໜີ ຫຼື ຮ້ອງຂໍຈິ່ງຈະດຳເນີນ ແລະ ກວດກາ (ກົດໝາຍອາຍາ ມາດຕາ 94);
3. ບໍ່ຕິດສະຫຼາກ, ຕິດສະຫຼາກສິນຄ້າ ບໍ່ຖືກຕ້ອງ ແລະ ບໍ່ມີສະຫຼາກເປັນພາສາລາວໂດຍສະເພາະສິນຄ້າທີ່ມີຄວາມສ່ຽງຕໍ່ຊີວິດ, ສຸຂະພາບ ແລະ ຄວາມປອດໄພຂອງຜູ້ຊົມໃຊ້ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບ/ຄັ້ງ ຫຼື ອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ (ກົດໝາຍມາດຕະຖານ ມາດຕາ 104);
4. ປອມແປງສະຫຼາກ, ຜະລິດ ຫຼື ນຳໃຊ້ສະຫຼາກປອມ ກ່ຽວກັບປະເພດ ສິນຄ້າ ຈະຖືກປັບໃໝ ແຕ່ 200.000 ກີບ ຫາ 2.000.000 ກີບ/ຄັ້ງ/ລາຍການ, ພ້ອມທັງອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ ແລະ ຈະຖືກດຳເນີນຄະດີ ຕາມກົດໝາຍອາຍາ (ກົດໝາຍ ອາຍາ ມາດຕາ 161);

5. ຜະລິດ, ນຳເຂົ້າ, ຈຳໜ່າຍສິນຄ້າ ທີ່ບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ, ສິນຄ້າປອມແປງ, ສິນຄ້າລອກຮຽນແບບ, ສິນຄ້າຕ້ອງຫ້າມຈະຖືກປັບໃໝແຕ່ 500.000 ກີບ ຫາ 5.000.000 ກີບ (ກົດໝາຍວ່າດ້ວຍ ມາດຕະຖານ ມາດຕາ 104 ແລະ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ມາດຕາ 134);
6. ບໍ່ຕິດປ້າຍລາຄາມີໂທດປັບໃໝແຕ່ 500.000 ກີບ ຫາ 1.000.000 ກີບ/ຄັ້ງ/ລາຍການ (ດຳລັດເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010 ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ມາດຕາ 26);
7. ປອມແປງເອກະສານ ຫຼື ໃຊ້ເອກະສານປອມກ່ຽວກັບສິນຄ້າ ແລະ ການບໍລິການ ຈະຖືກປັບໃໝ ແຕ່ 200.000 ກີບ ຫາ 2.000.000 ກີບ (ກົດໝາຍອາຍາ ມາດຕາ 161) ແລະ ຈະຖືກດຳເນີນຄະດີຕາມລະບຽບກົດໝາຍ;
8. ຕິດ, ປະກາດລາຄາ ແລະ ຮັບຊຳລະຄ່າສິນຄ້າ ແລະ ການບໍລິການເປັນເງິນຕາຕ່າງປະເທດ ຈະຖືກປັບໃໝ 50% ຂອງມູນຄ່າທີ່ລະເມີດ. ໃນກໍລະນີທີ່ໄດ້ປັບໃໝແລ້ວ ແຕ່ຍັງບໍ່ເຂັດຫລາບ ແລະ ຍັງສືບຕໍ່ລະເມີດ ຜູ້ລະເມີດຈະຖືກປັບໃໝ 100% ຂອງມູນຄ່າທີ່ລະເມີດ ແລະ ຈຳນວນເງິນ ຫຼື ວັດຖຸມີຄ່າທີ່ນຳໃຊ້ເຂົ້າໃນການລະເມີດ ຈະຖືກຮິບເຂົ້າງົບປະມານຂອງລັດ, ຜູ້ລະເມີດຖ້າຫາກເປັນບຸກຄົນ ຫຼື ນິຕິບຸກຄົນທີ່ດຳເນີນທຸລະກິດ ຍັງຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ (ລັດຖະບັນຍັດເລກທີ່ 01/ປສລ, ລົງວັນທີ່ 9 ສິງຫາ 2002 ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ມາດຕາ 37);
9. ລັກໂລບການຊັ່ງ, ການຜອງ, ການວັດແທກໂດຍນຳໃຊ້ຊິງ, ເຄື່ອງຜອງ, ເຄື່ອງວັດແທກດັດແປງເພື່ອເອົານ້ຳໜັກ, ບໍລິມາດ, ປະລິມານຂອງສິນຄ້າ ຫຼື ເງິນຈະຖືກ ປັບໃໝ ແຕ່ 100.000 ກີບ ຫາ 3.000.000 ກີບ (ກົດໝາຍອາຍາ ມາດຕາ 150);
10. ຂາຍ ຫຼື ສະໜອງອາຫານໃຫ້ແກ່ສັງຄົມ ທີ່ບໍ່ມີຄວາມປອດໄພ, ບໍ່ໄດ້ມາດຕະຖານ, ເຈືອປົນ, ປົນເປື້ອນ ຫຼື ໝົດອາຍຸການບໍລິໂພກ ຈະຖືກອາຍັດ ຫຼື ຍຶດ ແລະ ປັບໃໝຕາມມູນຄ່າຂອງສິນຄ້າ ແລະ ສະເໜີໃຫ້ພາກສ່ວນກ່ຽວຂ້ອງ ບໍ່ອະນຸຍາດໃຫ້ຜະລິດ, ນຳເຂົ້າ ແລະ ຈໍລະຈອນຈຳໜ່າຍຜະລິດຕະພັນນັ້ນ. (ມາດຕາ 50 ກົດໝາຍ ອາຫານ ແລະ ມາດຕາ 9 ຂໍ້ຕົກລົງຂອງລັດຖະມົນຕີກະຊວງ ສາທາລະນະສຸກ ວ່າດ້ວຍສະຫຼາກຂອງຜະລິດຕະພັນອາຫານທີ່ບັນຈຸໃນເຄື່ອງຫຸ້ມຫໍ່ ເລກທີ 519/ກສຊ. 18 ມີນາ 2009).

## ໝວດທີ IV
## ບົດບັນຍັດສຸດທ້າຍ

### ມາດຕາ 13. ການຈັດຕັ້ງປະຕິບັດ

ມອບໃຫ້ກົມການຄ້າພາຍໃນ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ.

ທຸກພາກສ່ວນທີ່ກ່ຽວຂ້ອງ, ຫ້ອງການ, ສະຖາບັນ, ບັນດາກົມອ້ອມຂ້າງກະຊວງອຸດສາຫະກຳ ແລະ ການຄ້າ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 14. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ.

ດຣ. ນາມ ວິຍະເກດ